ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
****** **** ******

ທະນາຄານແຫ່ງ ສປປ ລາວ
ຫ້ອງການ

ເລກທີ: 19 /ຫກ
ນະຄອນຫຼວງວຽງຈັນ, ວັນທີ: 19 MAY 2015

ສຳນັກງານ ຄຄຊ
ເລກທີ 524
ວັນທີ 20 MAY 2015
ໂທລະສັບ 021 217778

# ລາຍງານການເຄື່ອນໄຫວປະຈຳອາທິດ
## ທີ 04/05/2015 ຫາ 08/05/2015 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ
## ຂອງທະນາຄານແຫ່ງ ສປປ ລາວ

### I. ວຽກງານການເມືອງແນວຄິດ

ພະນັກງານທຸກຄົນມີຄວາມອຸ່ນອ່ຽນທຸ່ນທ່ຽງ ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ ມີສະຕິຕໍ່ການຈັດຕັ້ງ ແລະ ລະບຽບກົດໝາຍຢ່າງເຄັ່ງຄັດ; ຕັ້ງໜ້າປະຕິບັດວຽກງານຕາມພາລະບົດບາດ, ຕາມການຈັດຕັ້ງມອບໝາຍ, ປະຕິບັດວຽກງານຕາມລະບອບລວມສູນປະຊາທິປະໄຕ ໂດຍບຸກຄົນຮັບຜິດຊອບ ແລະ ປະຕິບັດລະບຽບລັດຖະກອນຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

### II. ວຽກງານວິຊາສະເພາະ

#### 1. ສະພາບເສດຖະກິດເງິນຕາສາກົນ

#### 1.1 ອັດຕາແລກປ່ຽນສາກົນ

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນເອີໂຣ ແລະ ບາງສະກຸນເງິນໃນພາກພື້ນອາຊີແຂງຄ່າຂຶ້ນ ເມື່ອທຽບໃສ່ເງິນໂດລາສະຫະລັດ.

| ສະກຸນເງິນກີບທຽບກັບໂດລາ | ອາທິດຜ່ານມາ 28/04/2015 | ອາທິດນີ້ 05/05/2015 | ເປີເຊັນ ແຂງຄ່າ(+) /ອ່ອນຄ່າ (–) |
|---|---|---|---|
| ເອີໂຣ/ ໂດລາ | 1,0887 | 1,1120 | -2,10% |
| ໂດລາ/ເຢນ | 119,04 | 120,15 | -0,92% |
| ໂດລາ/ບາດ | 32,62 | 33,35 | -2,18% |
| ໂດລາ/ເປໂຊ | 44,24 | 44,61 | -0,82% |
| ໂດລາ/ຣູເປັຍ | 12.980,33 | 13.014,67 | -0,26% |
| ໂດລາ/ໂດລາສິງກະໂປ | 1,3275 | 1,3351 | -0,57% |
| ໂດລາ/ຢວນ | 6,2074 | 6,2066 | 0,01% |

1.2 ສະພາບລາຄານ້ຳມັນ ແລະ ຄຳໃນຕະຫຼາດໂລກ

ລາຄານ້ຳມັນໃນຕະຫຼາດໂລກເພີ່ມຂຶ້ນ 4,47% ຈາກ 56,42 ໂດລາ/ບາເຣວ ມາເປັນ 58,94 ໂດລາ/ບາເຣວ ແລະ ລາຄາຄຳໃນຕະຫຼາດໂລກຫຼຸດລົງ 1,07% ຈາກ 1.200,60 ໂດລາ/ອອນ ມາເປັນ 1.187,70 ໂດລາ/ອອນ.

2. ສະພາບເສດຖະກິດເງິນຕາພາຍໃນ

2.1 ສະພາບອັດຕາແລກປ່ຽນພາຍໃນ

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເງິນກີບທຽບໃສ່ເງິນໂດລາແຂງຄ່າຂຶ້ນ 0,08% ສຳລັບອັດຕາ ທທກ ແລະ ແຂງຄ່າຂຶ້ນ 0,60% ສຳລັບອັດຕາຕະຫຼາດ, ສ່ວນເງິນກີບທຽບໃສ່ເງິນບາດ ແຂງຄ່າຂຶ້ນ 1,84% ສຳລັບອັດຕາ ທທກ ແລະ ແຂງຄ່າຂຶ້ນ 0,66% ສຳລັບອັດຕາຕະຫຼາດ, ທຽບໃສ່ປີຜ່ານມາເຫັນວ່າ: ເງິນກີບທຽບໃສ່ເງິນໂດລາອ່ອນຄ່າລົງ 0,19% ສຳລັບອັດຕາ ທທກ ແຕ່ແຂງຄ່າຂຶ້ນ 0,18% ສຳລັບອັດຕາຕະຫຼາດ, ສ່ວນເງິນກີບທຽບໃສ່ເງິນບາດແຂງຄ່າຂຶ້ນ 0,40% ສຳລັບອັດຕາ ທທກ ແລະ ແຂງຄ່າຂຶ້ນ 0,81% ສຳລັບອັດຕາຕະຫຼາດ.

| ອັດຕາ | ອາທິດຜ່ານມາ 28/04/2015 | | | ອາທິດນີ້ 05/05/2015 | | | % (+) ເງິນກີບແຂງ/ (-)ອ່ອນຄ່າ | | |
|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລ່ຍ | ຊື້ | ຂາຍ | ສະເລ່ຍ | ຊື້ | ຂາຍ | ສະເລ່ຍ |
| ອັດຕາທະຄານ[1] | | | | | | | | | |
| ໂດລາ | 8.083,55 | 8.115,00 | 8.099,69 | 8.074,04 | 8.104,75 | 8.093,56 | 0,12% | 0,13% | 0,08% |
| ບາດ | 250,65 | 251,82 | 251,32 | 245,76 | 246,95 | 246,78 | 1,99% | 1,97% | 1,84% |
| ອັດຕາຕະຫຼາດ | | | | | | | | | |
| ໂດລາ | 8.090,83 | 8.199,00 | 8.144,92 | 8.084,32 | 8.107,87 | 8.096,09 | 0,08% | 1,12% | 0,60% |
| ບາດ | 250,65 | 251,79 | 251,22 | 249,13 | 250,03 | 249,58 | 0,61% | 0,70% | 0,66% |
| ຜິດດ່ຽງອັດຕາ ທທກ ແລະ ຕະຫຼາດ: (+) ແມ່ນອັດຕາທະນາຄານທຸລະກິດແຂງກວ່າຕະຫຼາດ, (-) ແມ່ນອັດຕາທະນາຄານທຸລະກິດອ່ອນກວ່າຕະຫຼາດ, | | | | | | | | | |
| ໂດລາ | 0,09% | 1,04% | 0,56% | 0,13% | 0,04% | 0,03% | | | |
| ບາດ | 0,00% | -0,01% | -0,04% | 1,37% | 1,25% | 1,13% | | | |

2.2 ສະພາບຖານເງິນຕາ ແລະ ປະລິມານເງິນ M2

- ຖານເງິນຕາ ປະຈຳອາທິດນີ້ ຫຼຸດລົງ 3,13% ທຽບໃສ່ວັນທີ 30/04/2015, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 31,30%,
- ປະລິມານເງິນ M2 ຫຼຸດລົງ 0,81% ເມື່ອທຽບໃສ່ວັນທີ 30/04/2015, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 23,32%.

2.3 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນ ປະຈຳອາທິດ (ວັນທີ 04/05/2015) ເຫັນວ່າ ທທກ ຊື້ໂດລາສຸດທິ 26,15 ລ້ານໂດລາ (ໃນນີ້ ຊື້ໂດລາໄດ້ 97,95 ລ້ານໂດລາ ແລະ ຂາຍໂດລາໄດ້ 71,80 ລ້ານໂດລາ) ແຕ່ຂາຍເງິນບາດສຸດທິ 843,74 ລ້ານບາດ (ໃນນີ້ ຊື້ບາດໄດ້ 253,89 ລ້ານບາດ ແລະ ຂາຍບາດໄດ້ 1.097,64 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດເມື່ອທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາເພີ່ມຂຶ້ນ 54,55% ແຕ່ຫຼຸດລົງ 25,30% ສຳລັບເງິນບາດ;
- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ປະລິມານການຊື້-ຂາຍເງິນໂດລາມີ ຈຳນວນ 9,70 ລ້ານໂດລາ ແລະ ເງິນບາດມີ ຈຳນວນ 344,77 ລ້ານບາດ;

[1] %ການປ່ຽນແປງຂອງອັດຕາແລກປ່ຽນ ໃນອັດຕາຂອງ ທທກ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນ້ຳໜັກ;

- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ຂາຍໂດລາສຸດທິ ຈຳນວນ 5,08 ລ້ານໂດລາ ແລະ ຂາຍບາດສຸດທິ ຈຳນວນ 406 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບ ພາກສ່ວນອື່ນໆ ເຫັນວ່າ: ທຫລ ຂາຍໂດລາໄດ້ສຸດທິ ຈຳນວນ 23,92 ລ້ານໂດລາ ແຕ່ຊື້ບາດໄດ້ສຸດທິ ຈຳນວນ 783,40 ລ້ານບາດ.

ສະພາບການ ຊື້-ຂາຍເງິນຕາຕ່າງປະເທດ

(ຫົວໜ່ວຍ: ລ້ານ)

| | ອາທິດທີ່ຜ່ານມາ 28/04/2015 | | ອາທິດທີ 04/05/2015 | | (%) +ເພີ່ມຂຶ້ນ /-ຫລຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| 1, ການຊື້ເງິນຕາຕ່າງປະເທດ | | | | | | |
| - ທ/ຄທຸລະກິດລັດ | 19,78 | 348,63 | 70,33 | 143,14 | 255,61% | -58,94% |
| - ທ/ຄທຸລະກິດອື່ນໆ | 45,68 | 155,19 | 27,61 | 110,76 | -39,54% | -28,63% |
| ລວມຊື້: | **65,45** | **503,82** | **97,95** | **253,89** | **49,64%** | **-49,61%** |
| 2, ການຂາຍເງິນຕາຕ່າງປະເທດ | | | | | | |
| - ທ/ຄທຸລະກິດລັດ | 15,82 | 256,19 | 56,93 | 185,84 | 259,89% | -27,46% |
| - ທ/ຄທຸລະກິດອື່ນໆ | 28,56 | 1.049,19 | 14,87 | 911,80 | -47,95% | -13,10% |
| ລວມຂາຍ: | **44,38** | **1,.305,38** | **71,80** | **1,097,64** | **61,78%** | **-15,91%** |
| ຊື້-ຂາຍສຸດທິ ທທກ | **21,07** | **-801,56** | **26,15** | **-843,74** | **24,08%** | **5,26%** |
| ຜິດດ່ຽງ ຊື້-ຂາຍ | 32,20 | -159,10 | 26,70 | -332,32 | -549,98% | -173,34% |
| ມູນຄ່າການຊື້-ຂາຍ | **109,83** | **1.809,20** | **169,74** | **1.351,53** | **54,55%** | **-25,30%** |
| 3, ຊື້-ຂາຍລະຫວ່າງ ທຫລ ກັບ ທທກ | | | | | | |
| - ທຫລ ຊື້ຈາກ ທທກ | 0,00 | 208,00 | 8,00 | 19,00 | | |
| - ທຫລ ຂາຍໃຫ້ ທທກ | 19,15 | 282,00 | 13,08 | 425,00 | | |
| ຊື້-ຂາຍສຸດທິ ທຫລ | **-19,15** | **-74,00** | **-5,08** | **-406,00** | | |
| 4, ຊື້-ຂາຍ ລະຫວ່າງ ທທກ ດ້ວຍກັນ | **12,33** | **434,60** | **9,70** | **344,77** | | |
| 5, ຊື້-ຂາຍລະຫວ່າງ ທຫລ ກັບ ພາກສ່ວນ ອື່ນໆ (ກະຊວງການເງິນ, ຮ້ານແລກປ່ຽນ) | | | | | | |
| - ທຫລ ຊື້ຈາກ ພາກສ່ວນອື່ນໆ | 60,12 | 1.320,46 | 0,01 | 783,40 | | |
| - ທຫລ ຂາຍໃຫ້ ພາກສ່ວນອື່ນໆ | 40,86 | 0,00 | 23,93 | 0,00 | | |
| ຊື້-ຂາຍສຸດທິ ທຫລ | **19,26** | **1.320,46** | **-23,92** | **783,40** | | |

### 2.4 ສະພາບອັດຕາເງິນເຟີ້

ອັດຕາເງິນເຟີ້ ປະຈຳເດືອນ 04/2015 (ຕົວເລກຄາດຄະເນ) ຄາດວ່າຈະຢູ່ໃນລະດັບ 1,28% ເພີ່ມຂຶ້ນ 0,09% ຈາກ 1,19% ໃນເດືອນ 03/2015.

### 2.5 ການຄຸ້ມຄອງເງິນຕາຕ່າງປະເທດ ແລະ ການສົ່ງເສີມນຳໃຊ້ເງິນກີບ

ທຫລ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດອອກນອກ ສປປ ລາວ ຈຳນວນ 42,9 ລ້ານໂດລາສະຫະລັດທຽບເທົ່າ ເຊິ່ງຫຼຸດລົງ 68,4% ທຽບໃສ່ອາທິດຜ່ານມາ.

**2.6 ສະພາບການເຄື່ອນໄຫວຊຳລະສະສາງຜ່ານທະນາຄານແຫ່ງ ສປປ ລາວ**

ແຊັກເຄື່ອນໄຫວຜ່ານສູນຊຳລະສະສາງຂອງ ທຫລ ໃນອາທິດນີ້ ຈຳນວນ 676 ສະບັບ ທຽບໃສ່ອາທິດຜ່ານມາ ຫຼຸດລົງ 7,65% ລວມຈຳນວນເງິນທີ່ໂອນຜ່ານທັງໝົດ 367,29 ຕື້ກີບ ຫຼຸດລົງ 43,55% ເມື່ອທຽບໃສ່ອາທິດຜ່ານມາ.

ຕິດຕາມການໂອນເງິນຜ່ານລະບົບຊຳລະສະສາງແບບມູນຄ່າສູງ (RTGS) (04-07/05/2015) ມີຈຳນວນ 1.377 ຄັ້ງ ໂດຍມີມູນຄ່າ 477,85 ຕື້ກີບ ເພີ່ມຂຶ້ນ 48,62 ຊຶ່ງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ເຮັດທຸລະກຳຫຼາຍກວ່າໝູ່ ຈຳນວນ 354 ຄັ້ງ.

**2.7 ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ**

ດັດຊະນີຕະຫຼາດຫຼັກຊັບລາວ ໃນອາທິດນີ້ ປິດຢູ່ທີ່ 1.457,90 ຈຸດ ຫຼຸດລົງ 0,29% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດ ມີປະລິມານຊື້-ຂາຍຮຸ້ນທັງໝົດ 261.930 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 1,83 ຕື້ກີບ ຫຼຸດລົງ 67,66% ທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 59,55% ຂອງມູນຄ່າການຊື້-ຂາຍທັງໝົດ.

ຮຸ້ນຂອງທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ (BCEL) ມີລາຄາຊື້-ຂາຍສະເລ່ຍ 6.637 ກີບ/ຮຸ້ນ ຫຼຸດລົງ 133 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 90.360 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 599,693 ລ້ານກີບ ເພີ່ມຂຶ້ນ 140,69% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍກວມເອົາ 30,79% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ BCEL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນຢູ່ທີ່ 9,66%[2].

ຮຸ້ນຂອງບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (EDL-Gen) ມີລາຄາຊື້-ຂາຍສະເລ່ຍ 7.393 ກີບ/ຮຸ້ນ ຫຼຸດລົງ 111 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 156.778 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 1,15 ຕື້ກີບ ຫຼຸດລົງ 78,56% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດສະເລ່ຍ ກວມເອົາ 72,37% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ EDL-Gen ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 14,30%[3].

ຮຸ້ນຂອງບໍລິສັດ ລາວເວີນ ມະຫາຊົນ (LWPC) ມີລາຄາຊື້-ຂາຍສະເລ່ຍ 8.300 ກີບ/ຮຸ້ນ, ໂດຍໃນອາທິດນີ້ມີການຊື້-ຂາຍພຽງແຕ່ວັນດຽວ. ມີປະລິມານຊື້-ຂາຍທັງໝົດ 5.400 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 44,82 ລ້ານກີບ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດສະເລ່ຍກວມເອົາ 23,56% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ LWPC ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 2,70%[4].

ຮຸ້ນຂອງບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ (PTL) ມີລາຄາຊື້-ຂາຍສະເລ່ຍ 3.800 ກີບ/ຮຸ້ນ ເພີ່ມຂຶ້ນ 23 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 9.392 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 35,68 ລ້ານກີບ ເພີ່ມຂຶ້ນ 7,00% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດສະເລ່ຍກວມເອົາ 35,36% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ PTL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 12,72%[5].

**3. ວຽກງານອື່ນໆ ທີ່ພົ້ນເດັ່ນ.**

- ສຳເລັດການຈັດກອງປະຊຸມໃຫຍ່ອົງຄະນະພັກທະນາຄານແຫ່ງ ສປປ ລາວ ຄັ້ງທີ III;
- ສຳເລັດການເຂົ້າຮ່ວມກອງປະຊຸມ: ❶ ກອງປະຊຸມລະດັບລັດຖະມົນຕີການເງິນ ແລະ ຜູ້ວ່າການທະນາຄານກາງອາຊຽນ +3, ທີ່ບາກູ ປະເທດອາເຊີເບຈັນ, ❷ ກອງປະຊຸມເຈລະຈາການຄ້າຊາຍແດນ ສປປ ລາວ - ປະເທດ ສສ. ຫວຽດນາມ ທີ່ ຮ່າໂນຍ ປະເທດ ສສ. ຫວຽດນາມ, ❸ ກອງປະຊຸມໃນຫົວຂໍ້ "ການຄຸ້ມຄອງວຽກງານຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍຕໍ່ລະບົບທະນາຄານ" ທີ່ປະເທດມາເລເຊຍ, ❹ ກອງປະຊຸມຄະນະກຳມາທິການປະສານງານດ້ານການບໍລິການອາຊຽນຄັ້ງທີ 81 ທີ່ປະເທດມາເລເຊຍ;

[2]ສັດສ່ວນຖືຄອງຮຸ້ນ BCEL ຂອງຜູ້ລົງທຶນຕ່າງປະເທດສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 10%;

[3]ສັດສ່ວນຖືຄອງຮຸ້ນ EDL-Gen ຂອງຜູ້ລົງທຶນຕ່າງປະເທດສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 20%;

[4]ສັດສ່ວນຖືຄອງຮຸ້ນ LWPC ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກຳນົດ;

[5]ສັດສ່ວນຖືຄອງຮຸ້ນ PTL ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກຳນົດ.

- ສຳເລັດການເຂົ້າຮ່ວມຝຶກອົບຮົມ ແລະ ສຳມະນາ: ❶ ຝຶກອົບຮົມ ໃນຫົວຂໍ້ "Workshop on secured Transection Legal Framercial Transection" ທີ່ໂຮງແຮມລາວພລາຊາ, ❷ ສຳມະນາໃນຫົວຂໍ້ "Electronic Payment System Workshop" ທີ່ໂຮງແຮມລາວພລາຊາ, ❸ ສຳມະນາຂອງບໍລິສັດ VISA ໃນຫົວຂໍ້ "Growing payment in Lao PDR;
- ສຳເລັດການຮ່ວມເຮັດວຽກກັບຄະນະຄົ້ນຄວ້າ ຮ່າງລະບຽບກ່ຽວກັບການຢຶດ, ອາຍັດທຶນຂອງຜູ້ກໍ່ການຮ້າຍ ແລະ ການຟອກເງິນ ເພື່ອຜັນຂະຫຍາຍ ມາດຕາ 38,39 ແລະ 40 ຂອງກົດໝາຍວ່າດ້ວຍການຕ້ານ ສະກັດກັ້ນ ການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ;

## III. <u>ແຜນວຽກຈຸດສຸມອາທິດຕໍ່ໄປ:</u>

- ສືບຕໍ່ພິມທະນະບັດງວດ 5 ປະເພດໃບ 2,000 ກີບໃໝ່ ລຸ້ນປີ 2011 ຈຳນວນ 60 ລ້ານໃບ;
- ສືບຕໍ່ຄົ້ນຄວ້າ: ❶ ສຶກສາຄົ້ນຄວ້າເນື້ອໃນຂອງຫຼັກການ ບາເຊວ 2 ແລະ ບົດຮຽນຂອງບັນດາປະເທດທີ່ຈັດຕັ້ງປະຕິບັດການຄຸ້ມຄອງທະນາຄານ ຕາມຫຼັກການ ບາເຊວ 2, ❷ ຄົ້ນຄວ້າ ຮ່າງລະບຽບກ່ຽວກັບການຢຶດ, ອາຍັດທຶນຂອງຜູ້ກໍ່ການຮ້າຍ ແລະ ການຟອກເງິນ ເພື່ອຜັນຂະຫຍາຍ ມາດຕາ 38,39 ແລະ 40 ຂອງກົດໝາຍວ່າດ້ວຍການຕ້ານ ສະກັດກັ້ນ ການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ, ❸ ຄົ້ນຄວ້າລະບຽບກ່ຽວກັບການປັບໄໝ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ລະເມີດກົດໝາຍວ່າດ້ວຍການຕ້ານ ສະກັດກັ້ນ ການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ, ❹ ສືບຕໍ່ຄົ້ນຄວ້າຮ່າງກ່ຽວກັບລະບຽບວ່າດ້ວຍ ປະກັນໄພ ການເງິນຈຸນລະພາກ, ❺ ສືບຕໍ່ຄົ້ນຄວ້າ ແລະ ປັບປຸງຮ່າງລະບຽບວ່າດ້ວຍການຄຸ້ມຄອງການຊື້-ຂາຍຮຸ້ນ ຂອງຜູ້ລົງທຶນຕ່າງປະເທດທີ່ເຄື່ອນໄຫວຊື້-ຂາຍຫຼັກຊັບຢູ່ ສປປ ລາວ, ຮ່າງລະບຽບວ່າດ້ວຍການຮັບຮອງບໍລິສັດຈັດລຳດັບຄວາມໜ້າເຊື່ອຖືຕ່າງປະເທດ ແລະ ຮ່າງລະບຽບວ່າດ້ວຍການຮັບຮອງບໍລິສັດປະເມີນມູນຄ່າຊັບສິນຕ່າງປະເທດ, ❻ ສືບຕໍ່ຄົ້ນຄວ້າ ແລະ ປັບປຸງຮ່າງລະບຽບວ່າດ້ວຍການສະໜອງຂໍ້ມູນເພີ່ມເຕີມກ່ຽວກັບແຫຼ່ງທຶນ, ໂຄງສ້າງຜູ້ຖືຮຸ້ນ ແລະ ຜູ້ທີ່ໄດ້ຮັບຜົນປະໂຫຍດທີ່ແທ້ຈິງຂອງບໍລິສັດຫຼັກຊັບ;
- ສືບຕໍ່ຈັດຕັ້ງປະຕິບັດເງື່ອນໄຂ PRSO 8-11 (ປີ2012-2015);
- ກະກຽມຈັດສະມະນາ ໃນຫົວຂໍ້: "ການຮັກສາສຸຂະພາບໄວຈະເລີນພັນ" ເພື່ອໃຫ້ພະນັກງານ ທຫລ, ທະນາຄານທຸລະກິດລັດ ແລະ ຕາງໜ້າກະຊວງຈຳນວນໜຶ່ງ ເພື່ອຮັບຮູ້ເຖິງຄວາມໝາຍ ແລະ ຄວາມສຳຄັນ.

**ຫົວໜ້າຫ້ອງການທະນາຄານແຫ່ງ ສປປ ລາວ.**

ທະນາຄານແຫ່ງ ສປປ ລາວ
ຫ້ອງການ

ພາສີ ພິມມະກອນ